

# ການຟອກສີຂຽວ ແມ່ນຫຍັງ?

ການປົກປິດຄວາມຈິງ



# Greenwashing ແມ່ນ...

...ເມື່ອບໍລິສັດ ທຳທ່າເປັນມິດຕໍ່ສິ່ງແວດລ້ອມເພື່ອໃຫ້ເບິ່ງດີ
ແຕ່ບໍ່ໄດ້ຊ່ວຍປົກປ້ອງສິ່ງແວດລ້ອມຢ່າງແທ້ຈິງ.



**ນີ້ແມ່ນການຕະຫຼາດ**
**ທີ່ຕົວະຍົວະຫຼອກລວງ!**

## ຕົວຢ່າງ: ບໍລິສັດເວົ້າວ່າຜະລິດຕະພັນຂອງຕົນ “ເປັນມິດຕໍ່ສິ່ງແວດລ້ອມ” ແຕ່ຍັງສ້າງມົນລະພິດຕໍ່ສິ່ງແວດລ້ອມ.




ບໍລິສັດຂະໜາດໃຫຍ່ໃນໂລກແຫ່ງໜຶ່ງ **British Petroleum** ໄດ້ປ່ຽນຊື່ເປັນ “**Beyond Petroleum**” ແລະໃຊ້ສັນຍະລັກ “ສີຂຽວ.

ແຕ່ບໍລິສັດບໍ່ໄດ້ຫັນຈຸດສຸມຂອງຕົນອອກຈາກພະລັງງານຟອດຊິນທີ່ເປັນມົນລະພິດ.




# ບໍລິສັດຕ່າງໆ ເຮັດໄດ້ແນວໃດ?

### ຄຳກ່າວອ້າງວ່າເປັນ “ສີຂຽວ” ແຕ່ບໍ່ຊັດເຈນ

ພວກເຂົາຂາດລາຍລະອຽດ ແລະ ຫຼັກການທີ່ຊັດເຈນ.

### ຄຳທີ່ບໍ່ຊັດເຈນ

ຄຳເຊັ່ນ “ທຳມະຊາດທັງໝົດ” ຫຼື “ປອດສານພິດ” ຟັງແລ້ວດີ ແຕ່ບໍ່ມີໃຈຄວາມແທ້.

### ບໍ່ມີຫຼັກການ

ຕົວສິນຄ້າອ້າງວ່າ “ບໍ່ໄດ້ທົດລອງກັບສັດ” ແຕ່ບໍ່ມີໃບຮັບຮອງ.

### ໃຫ້ນ້ຳໜັກຮູບພາບຫຼາຍກວ່າເນື້ອໃນ

ໃຊ້ຮູບພາບທີ່ເປັນມິດກັບສິ່ງແວດລ້ອມ ໂດຍບໍ່ມີການປະຕິບັດຈິງ.

# ການຟອກສີຂຽວ – ມັນຜິດຫຍັງ?



### ມັນແມ່ນການຫຼອກລວງ

ການກ່າວອ້າງທີ່ຫຼອກລວງເຮັດໃຫ້ ຜູ້ບໍລິໂພກເຂົ້າໃຈຜິດ ແລະ ຄິດວ່າຕົນເອງກຳລັງຊ່ວຍສິ່ງແວດລ້ອມ

### ມັນທຳລາຍຄວາມໄວ້ວາງໃຈ

ຖ້າຜູ້ຄົນບໍ່ໄວ້ວາງໃຈໃນສິນຄ້າສີຂຽວ ພວກເຂົາອາດຈະບໍ່ຊື້ສິນຄ້າທີ່ເປັນມິດກັບສິ່ງແວດລ້ອມແທ້ໆອີກຕໍ່ໄປ.

## ຢ່າເຊື່ອປ້າຍສິນຄ້າ ຖ້າຄຳກ່າວອ້າງບໍ່ມີຫຼັກການຮອງຮັບ.




ປ້າຍສິນຄ້ານີ້ ລະບຸວ່າ “ທຳມະຊາດ 100%”
ແຕ່ບໍລິສັດບໍ່ບອກໃຫ້ຮູ້ເລີຍວ່າມັນໝາຍເຖິງຫຍັງ!!

# ວິທີຫຼີກລ້ຽງການການຟອກສີຂຽວ

- **ຖາມຄຳຖາມ** – ໃຜຮອງຮັບຄຳກ່າວອ້າງເຫຼົ່ານີ້? ມີຫຼັກຖ□ານ ຫຼື ບໍ່?
- **ຄົ້ນຫາໃບຮັບຮອງ** – ສິນຄ້າທີ່ເປັນມິດກັບສິ່ງແວດລ້ອມທີ່ແທ້ຈິງຈະມີປ້າຍທີ່ເຊື່ອໄດ້.
- **ກວດສອບການດຳເນີນງານຂອງບໍລິສັດວ່າໄດ້ປົກປ້ອງສິ່ງແວດລ້ອມ ແທ້ ຫຼື** ພຽງແຕ່ໂຄສະນາເທົ່ານັ້ນ?
- **ໃຊ້ຄວາມຮູ້ສຶກສຳນຶກ** – ຖ້າບໍລິສັດມີປ່ອຍມົນລະພິດຫຼາຍ, ຄຳອ້າງ "ສີຂຽວ" ກໍ່ອາດຈະເປັນການຫຼອກລວງ.





# ຂອບໃຈ!